ເຖິງເດືອນສິງຫາ ປີ ຄ.ສ. 1642 ນ້ຳຂອງຂຶ້ນເຕັມຝັ່ງ ຊາວຮໍລັນດາ ກໍເດີນທາງກັບຄືນເມືອ ດ້ວຍເຮືອທີ່ບັນທຸກສິນຄ້າ ແລະ ພຣະຣາຊສານພ້ອມດ້ວຍເຄື່ອງບັນນາການສຳລັບທ່ານນາຍພົນ ວັນດີແອແມນ. ສົມເດັດພຣະເຈົ້າສຸຣິຍະວົງສາ ບໍ່ສາມາດສົ່ງຣາຊທູດໄປນຳເທື່ອ ເພາະເວລານັ້ນ ສັມພັນທະໄມຕີລະຫວ່າງ ລາວ ກັບ ຂະເມນ ກຳລັງເຄັ່ງຕຶງ. ວັນທີ 6 ຕຸລາ ປີ ຄ.ສ. 1642 ເຮືອສິນຄ້າ ຂອງຮໍລັນດາ ກໍຜ່ານເມືອງບັດຈອງລົງໄປ ຊຶ່ງເປັນເຂດໃຕ້ສຸດຂອງລາວ.

**2. ຄະນະຄຸນພໍ່ເລີຣີອາ ແລະ ຄຸນພໍ່ມາຣີນີ**

ຄຸນພໍ່ສອນສາສນາຄຣິດ ທັງສອງນີ້ ໄດ້ເຂົ້າມາເຖິງນະຄອນວຽງຈັນ ໃນປີ 1642 ເຖິງປີ 1647. ຄຸນພໍ່ເລີຣີອາ ໄດ້ກ່າວເຖິງສະພາບການຕ່າງໆ ໃນຣາຊອານາຈັກລາວໄວ້ຫລາຍປະການ ເຊັ່ນ ຄວາມຍິ່ງໃຫຍ່ ຄວາມອຸດົມສົມບູນ ແລະ ກຳລັງທະຫານໃນເວລານັ້ນ ວ່າ:

*" ໃນຈຳພວກອານາຈັກທີ່ເຂັ້ມແຂງທັງຫລາຍ ຂອງປະເທດອາຊີຕາເວັນອອກ ມີປະເທດນຶ່ງ ຊຶ່ງບໍ່ມີຜູ້ຮູ້ຈັກ ແລະ ເລົ່າສູ່ກັນຟັງໃນປະເທດເອີຣົບ. ປະເທດນັ້ນເຂົາເອີ້ນວ່າ ປະເທດລາວ ຫລືຄວາມນຶ່ງວ່າ ປະເທດລ້ານຊ້າງ ... ປະເທດນີ້ ຢູ່ໄກທະເລປະມານ 300 ໄມ ແຕ່ທິດເໜືອ ຫາທິດໃຕ້ ... ປະເທດນີ້ມີພູເຂົາສູງອ້ອມທຸກດ້ານ ຂນາດຕາດິນມີແຕ່ 150 .. ໄມ ແມ່ນປະເທດ ມີທົ່ງຮາບພຽງ ປະກອບດ້ວຍດິນດີ ແລະ ສິ່ງທັມມະຊາດນາໆປະການທີ່ເປັນປໂຍດແກ່ຊີວິດ ສິ່ງເຫລົ່ານີ້ເກີດຂຶ້ນຢ່າງສົມບູນພູນສຸກ. ນອກຈາກພູເຂົາທີ່ເປັນຮົ້ວອ້ອມປະເທດ ເພື່ອປ້ອງກັນ ສັດຕູຕ່າງປະເທດແລ້ວ ກໍມີປ່າດົງພົງໄພ ເຊິ່ງມີໄມ້ຫລາຍຊະນິດ ທີ່ຜົລເມືອງຂາຍອອກ ໃຫ້ປະເທດໃກ້ຄຽງ. ປ່າໄມ້ນັ້ນຍັງເຮັດໃຫ້ທົ່ງນາ ແລະ ສວນມີຝຸ່ນດີສຳລັບຜົລປູກ. ປ່າໄມ້ ເຫລົ່ານີ້ ລ້ວນແຕ່ມີລຳໃຫຍ່ສູງຢູ່ຕາມຕີນພູ ເປີ້ນພູ ທັງໝົດເປັນຮົ້ວອ້ອມແຜ່ນດິນຂອງລາວ, ເມື່ອເບິ່ງຄັກໆແລ້ວ ກໍປານັກດວ່າ ຕົ້ນໄມ້ນີ້ ຄື ຖືກຄົນປູກໂດຍສະເພາະ ເພື່ອເປັນກຳລັງ ອ້ອມປະເທດ ... ".*

**ວ່າດ້ວຍເຂົ້າ ...**

*" ເຂົ້າເຊິ່ງປູກໃນປະເທດນີ້ ແມ່ນງາມຫລາຍ ຫາບ່ອນຈະປຽບບໍ່ໄດ້ ມີຣົດ ແລະ ກິ່ນຫອມ ພິເສດ. ບໍ່ແມ່ນແຕ່ເຂົ້າ ເຄື່ອງຂອງອື່ນໆກໍງາມໄປຕາມຕາມກັນ, ມີບ່ອນນຶ່ງທີ່ເຂົາປູກເຂົ້າຫອມ ຄົງແມ່ນຖິ່ນທີ່ຢູ່ພາກຕາເວັນອອກຂອງພຣະຣາຊອານາຈັກ ແລະ ເຂົາຄາດຄະເນວ່າ ໃນຈຳພວກ ປະເທດຕ່າງໆ ໃນຕາເວັນອອກໃກ້ນີ້ ມີບ່ອນດຽວທີ່ຈະມີເຂົ້າຫອມແບບນີ້ ... "*